ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ ..34.. ../ນຍ

ນະຄອນຫຼວງວຽງຈັນ, ວັນທີ 23.11.2011.

# ຄຳສັ່ງ

## ວ່າດ້ວຍ ການສົ່ງເສີມການຂະຫຍາຍ ແລະ ການຄຸ້ມຄອງໄມ້ປະດັບໃນ ສປປ ລາວ

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ປະທານສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ໃນທົ່ວປະເທດ.

– ອີງຕາມມາດຕາ 7 ຂອງກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;

– ອີງຕາມມາດຕາ 35 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;

– ອີງຕາມໜັງສືສະເໜີຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 103/ກປ, ລົງວັນທີ.. 08/11/2011.

ເພື່ອຊຸກຍູ້ການສົ່ງເສີມການຂະຫຍາຍພັນ ແລະ ການຄຸ້ມຄອງໄມ້ປະດັບໃນ ສປປ ລາວ ໃຫ້ມີການຂະຫຍາຍຕົວ, ນຳຜົນປະໂຫຍດມາໃຫ້ຊາດ ແລະ ປະຊາຊົນ, ແນໃສ່ຮັບປະກັນຄວາມຍືນຍົງຂອງຊີວະນາໆພັນດ້ານປ່າໄມ້, ການອະນຸລັກພັນທຸກຳຊະນິດພັນໄມ້ ແລະ ສ້າງຄວາມສົມດູນຂອງທຳມະຊາດ ໂດຍມີການຄຸ້ມຄອງໃຫ້ມີຄວາມສອດຄ່ອງ ແລະ ຖືກຕ້ອງຕາມລະບຽບການ ແລະ ກົດໝາຍ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1/. ໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ປະທານສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ບັນດາເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ເອົາໃຈໃສ່ວຽກງານຊຸກຍູ້ສົ່ງເສີມ, ການຂະຫຍາຍພັນ ແລະ ການຄຸ້ມຄອງໄມ້ປະດັບໃນ ສປປ ລາວ ໃຫ້ມີຄວາມຍືນຍົງ ທັງນຳເອົາຜົນປະໂຫຍດມາໃຫ້ປະຊາຊົນຢ່າງສົມເຫດສົມຜົນ, ເຊິ່ງໃນໄລຍະຜ່ານມາເຖິງວ່າພວກເຮົາໄດ້ເຮັດວຽກນີ້

ມີຜົນສຳເລັດຫຼາຍຢ່າງ, ແຕ່ກໍ່ຍັງມີສະພາບການຂຸດຄົ້ນ, ເກັບຊື້ເບ້ຍໄມ້ ແລະ ຕົ້ນໄມ້ຈາກປ່າທຳມະຊາດ ເພື່ອຈຸດປະສົງນຳໃຊ້ເປັນໄມ້ປະດັບຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດເປັນຈຳນວນຫຼວງຫຼາຍ, ນັບທັງການນຳເຂົ້າໄມ້ປະດັບຈາກຕ່າງປະເທດ. ຕໍ່ສະພາບການດັ່ງກ່າວນີ້ ໄດ້ເຮັດໃຫ້ສູນເສຍລາຍຮັບຂອງຊາດ ແລະ ຂອງປະຊາຊົນ, ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ແຜນພັດທະນາເສດຖະກິດ-ສັງຄົມ, ທັງເປັນການທຳລາຍໂຄງສ້າງ ແລະ ລະບົບນິເວດຂອງປ່າໄມ້.

2/. ລັດຖະບານ ມີນະໂຍບາຍສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການກິດຈະການກະສິກຳ ແລະ ປ່າໄມ້ ສ້າງຕັ້ງ ແລະ ພັດທະນາສູນ, ສວນພຶກສາດ, ສວນສະສົມແຫຼ່ງພັນທຸກຳພັນພືດ ແລະ ສວນເພາະພັນໄມ້ປະດັບຢູ່ພາຍໃນປະເທດຢ່າງກວ້າງຂວາງ ແລະ ຕ້ອງໄດ້ຮັບອະນຸຍາດການລົງທຶນນຳຂະແໜງການທີ່ກ່ຽວຂ້ອງ ແລະ ໃບອະນຸຍາດດຳເນີນກິດຈະການໄມ້ປະດັບ ນຳຂະແໜງການກະສິກຳ ແລະ ປ່າໄມ້ ດັ່ງນີ້:

2.1) ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຄົ້ນຄວ້າທົດລອງ ແລະ ຂະຫຍາຍພັນທຸກຳໄມ້ປະດັບ ເພື່ອສ້າງມູນຄ່າເພີ່ມ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນ ແລະ ຜູ້ປະກອບການ;

2.2) ອະນຸຍາດໃຫ້ນຳເຂົ້າຊະນິດໄມ້ປະດັບທີ່ບໍ່ມີໃນ ສປປ ລາວ ເພື່ອເອົາມາເປັນພໍ່ແມ່ພັນ ເພື່ອຂະຫຍາຍພັນ ໂດຍໄດ້ຮັບອະນຸມັດຈາກພາກສ່ວນກ່ຽວຂ້ອງຕາມລະບຽບຫຼັກການ;

2.3 ) ອະນຸຍາດໃຫ້ຜູ້ປະກອບການກິດຈະການໄມ້ປະດັບ ນຳເອົາເບ້ຍໄມ້ທຳມະຊາດ ແລະ ຕົ້ນໄມ້ຊະນິດຕ່າງໆ ທີ່ຂຸດຄົ້ນອອກຈາກພື້ນທີ່ກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດພັດທະນາທີ່ລັດຖະບານອະນຸມັດ ເພື່ອນຳມາເພາະຊຳເປັນໄມ້ປະດັບ, ເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ.

3/. ການຄຸ້ມຄອງກິດຈະການກ່ຽວກັບໄມ້ປະດັບ ແມ່ນໃຫ້ປະຕິບັດ ດັ່ງນີ້:

**3.1) ການຄຸ້ມຄອງສາຍພັນ:**

ສຳລັບຊະນິດພັນໄມ້ປະເພດຫວງຫ້າມໃກ້ຈະສູນພັນ (ໄມ້ຂະຍູງ, ດູ່, ແຕ້...), ໄມ້ທີ່ຮັກສາຄວາມຊຸ່ມຊື່ນຂອງດິນ (ໄມ້ລີ້ມຝາດ, ກະໂດນນ້ຳ...). ໄມ້ໃຫ້ໝາກທຳມະຊາດ (ໄມ້ໂພ, ໄຮ...) ແມ່ນຫ້າມຂຸດຄົ້ນ, ເກັບຊື້ ແລະ ສົ່ງອອກ; ສຳລັບໄມ້ປະເພດດັ່ງກ່າວທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຂຸດຄົ້ນອອກຈາກເຂດກໍ່ສ້າງພື້ນຖານໂຄງລ່າງທີ່ລັດຖະບານອະນຸມັດນັ້ນ ແມ່ນມີແຕ່ລັດຖະບານເທົ່ານັ້ນ ເປັນຜູ້ພິຈາລະນາໃຫ້ສົ່ງອອກຕາມການຄົ້ນຄ້ວານຳສະເໜີຂອງ ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້;

**3.2) ການຄຸ້ມຄອງຊື້-ຂາຍ:**

ເບ້ຍໄມ້ ແລະ ຕົ້ນໄມ້ທີ່ຜ່ານຂະບວນການຂະຫຍາຍພັນ ແລະ ເພາະຊຳຈາກສູນ ຫຼືສວນເພາະປູກ ລວມທັງເບ້ຍໄມ້ ແລະ ຕົ້ນໄມ້ ທີ່ຂຸດອອກຈາກເຂດກໍ່ສ້າງພື້ນຖານໂຄງລ່າງ ແມ່ນອະນຸຍາດໃຫ້ຊື້-ຂາຍໄດ້ຢູ່ພາຍໃນ ແລະ ໃຫ້ສົ່ງອອກ, ແຕ່ຕ້ອງໄດ້ມີການສຳຫຼວດ, ຂຶ້ນບັນຊີ ແລະ ຢັ້ງຢືນແຫຼ່ງທີ່ມາຂອງຊະນິດໄມ້ດັ່ງກ່າວຈາກຂະແໜງກະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການຄົ້ນຄ້ວາພິຈາລະນາ, ເດັດຂາດບໍ່ໃຫ້ໄປຂຸດຄົ້ນ, ເກັບຊື້ເບ້ຍໄມ້, ຕົ້ນໄມ້ແບບຊະຊາຍ ໂດຍສະເພາະໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ແລະ ເຂດປ່າຊົມໃຊ້ຂອງບ້ານ ເພື່ອຂໍອະນຸຍາດສົ່ງອອກ;

**3.3) ການເຄື່ອນຍ້າຍພາຍໃນ:**

ການເຄື່ອນຍ້າຍພາຍໃນສຳລັບເບ້ຍໄມ້ ແລະ ຕົ້ນໄມ້ປະດັບຈາກສູນ ຫຼື ສວນເພາະປູກຈາກ

ບ່ອນນີ້ ໄປຫາສະຖານທີ່ອື່ນ ເພື່ອນຳໄປປູກເປັນໄມ້ປະດັບຕາມຈຸດປະສົງ ແມ່ນສາມາດເຄື່ອນຍ້າຍໄດ້. ແຕ່ຕ້ອງມີເອກະສານຢັ້ງຢືນຈາກສູນ ຫຼື ສວນເພາະປູກຕົ້ນທາງ; ສ່ວນການເຄື່ອນຍ້າຍໄມ້ທຳມະຊາດທີ່ຂຸດຄົ້ນອອກຈາກເຂດກໍ່ສ້າງງພື້ນຖານໂຄງລ່າງ ແມ່ນຕ້ອງມີບົດບັນທຶກການສຳຫຼວດຕົວຈິງ ແລະ ບັນຊີຕົ້ນໄມ້ໃນເຂດດັ່ງກ່າວຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຂະແໜງປ່າໄມ້;

3.4) ການສົ່ງອອກ:

ການເຄື່ອນຍ້າຍເພື່ອສົ່ງອອກຕ່າງປະເທດ ແມ່ນຕ້ອງປະກອບເອກະສານອະນຸຍາດເຄື່ອນຍ້າຍຕາມລະບຽບການຂອງ ສປປ ລາວ ແລະ ລະບຽບການຂອງສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ ສປປ ລາວ ເຂົ້າເປັນພາຄີ.

4/. ການມອບຄວາມຮັບຜິດຊອບ:

4.1) ມອບໃຫ້ ທ່ານ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ຈັດຕັ້ງນຳພາຂະແໜງການສາຍຕັ້ງຂັ້ນທ້ອງຖິ່ນ ຈັດຕັ້ງກຸ່ມການຜະລິດໄມ້ປະດັບ ໂດຍມີການຂຶ້ນທະບຽນການດຳເນີນກິດຈະການ ແລະ ຄຸ້ມຄອງການນຳເຂົ້າ, ສົ່ງອອກປະເພດໄມ້ປະດັບຕາມລະບຽບ ແລະ ກົດໝາຍ;

4.2) ມອບໃຫ້ ທ່ານລັດຖະມົນຕີວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈັດຕັ້ງນຳພາຂະແໜງການສາຍຕັ້ງຂັ້ນທ້ອງຖິ່ນເພື່ອສຳຫຼວດ, ຂຶ້ນບັນຊີຊະນິດພັນພືດ, ພັນໄມ້ທີ່ມັກນຳມາໃຊ້ເປັນໄມ້ປະດັບ ເພື່ອອະນຸລັກຮັກສາພັນທຸກຳ ທີ່ເປັນເອກະລັກສະເພາະ ແລະ ບັນຊີຂອງ CITES;

4.3) ໃຫ້ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ບັນດາເຈົ້າຂອງໂຄງການເປັນເຈົ້າການຊຸກຍູ້ສົ່ງເສີມ ແລະ ນຳໃຊ້ໄມ້ປະດັບທີ່ຜະລິດຢູ່ພາຍໃນ ເພື່ອເປັນການກະຈາຍລາຍຮັບໃຫ້ແກ່ສັງຄົມ ແລະ ຫຼຸດຜ່ອນການນຳເຂົ້າໄມ້ປະດັບຈາກຕ່າງປະເທດ;

4.4) ໃຫ້ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ຈັດຕັ້ງນຳພາປະຊາຊົນ ໃຫ້ເຂົ້າຮ່ວມໃນການປົກປັກຮັກສາພັນທຸກຳໄມ້ປະດັບຢູ່ທ້ອງຖິ່ນຂອງຕົນ ແລະ ຕັ້ງໜ້າພັດທະນາຂະບວນການຜະລິດໄມ້ປະດັບ ໃຫ້ມີຄວາມກ້າວໜ້າ, ສາມາດສ້າງມູນຄ່າເພີ່ມ ແລະ ກາຍເປັນສິນຄ້າທີ່ມີຄຸນນະພາບ.

5/. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ທຸກພາກສ່ວນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ. ມອບໃຫ້ ທ່ານ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອຳນວຍຄວບຄຸມການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ